**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 06 ພຶສຈິກາ 2022 (11-06-2022)**

---

**ຄຶດຕຶກຕອງພຣະຄຳຂອງພຣະເຈົ້າ.**

*ມີບົດເພງອັນໃດຫຼືມີສຽງອັນໃດທີ່ມັນດັງຕິດຢູ່ໃນຫົວຂອງທ່ານ?*

**ຈຸດສຳຄັນໃນບົດຮຽນ:** ການໃຫ້ພຣະຄຳຂອງພຣະເຈົ້າຕື່ມເຕັມຢູ່ໃນມັນສມອງຂອງເຮົາເຮັດໃຫ້ເຮົາໃສ່ໃຈໃນສິ່ງທີ່ເປັນຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຊີວິດ:**

ນັກວິຊາການຄົ້ນຄົ້ວໄດ້ກ່າວວ່າພວກເຮົາໄດ້ຮັບຂໍ້ຄວາມຊື່ສານໃນທຸກທີ່ລະຫ່ວາງ 4,000 ຫາ 10,000 ຂໍ້ຄວາມຕໍ່ມື້. ຕົວເລກນັ້ນເບິ່ງຄືວ່າບໍ່ເປັນຕາໜ້າເຊື່ອຈົນກ່ວາພວກເຮົາພິຈາລະນາຈຳນວນເວລາທີ່ພວກເຮົາໃຊ້ເວລາຢູ່ໜ້າຈໍມືຖືຫຼືຄອມ. ຄົນອາເມຣິກາເຮົາຄິດສະເລັ່ງແລ້ວຫຼາຍກ່ວາເຈັດຊົ່ວໂມງຕໍ່ມື້ທີ່ເຮົາເບິ່ງຈໍມືຖືຫຼືຄອມ. ອັນນີ້ລວມມີອີກຫຼາຍກ່ວາສາມຊົ່ວໂມງທີ່ໃຊ້ໃນການໂທລະສັບຂອງພວກເຮົາ ແລະກໍເກືອບສີ່ຊົ່ວໂມງຢູ່ໃນຄອມພິວເຕີ. ພວກເຮົາໃຊ້ເວລາຫຼາຍກ່ວາສອງຊົ່ວໂມງຂອງເວລາເຫຼົ່ານັ້ນເລື່ອນຜ່ານສື່ສັງຄົມ. ນອກຈາກນັ້ນ, ໂດຍສະເລັ່ງ, ພວກເຮົາເບິ່ງໂທລະທັດພຽງເລັກນ້ອຍຫຼາຍກ່ວາສາມຊົ່ວໂມງຕໍ່ມື້. ໃນຂນະດຽວກັນນັ້ນ, ຄຣິສະຕຽນພວກເຮົາມີພຽງແຕ່ 39 ເປີເຊັນຂອງຄຣິສະຕຽນທີ່ໄປໂບດຢ່າງນ້ອຍນຶ່ງຄັ້ງຕໍ່ເດືອນທີ່, "ອ່ານພຣະຄັມພີ" ແລະມີພຽງເລັກນ້ອຍທີ່ອ່ານໃນແຕ່ລະວັນ.

ສະຖິຕິເຫຼົ່ານີ້ສະແດງໃຫ້ເຫັນເຖິງຄວາມບໍ່ສົມດູນອັນໜັກໜ່ວງທີ່ສົ່ງຜົນເສັຽຫາຍຕໍ່ການອ່ານພຣະຄັມພີຂອງຊີວິດຂອງພວກເຮົາ. ພວກເຮົາປະເຊີນຂໍ້ຄວາມສື່ສານທີ່ຂັດຂວາງສຳລັບຄວາມຄິດ, ຕັ້ງໃຈໃສ່, ແລະສັດຊື່; ແຕ່ໃນຈຳນວນນັ້ນຂອງພວກເຂົາມີຈັກຄົນແທ້ໆທີ່ເອົາໃຈໃສ່ກັບເວລາຂອງການອ່ານຂອງພວກເຮົາ? ໃນທາງກົງກັນຂ້າມ, ທຸກສິ່ງທຸກຢ່າງໃນພຣະຄຳຂອງພຣະເຈົ້າມີຄວາມສຳຄັນຫຼາຍແລະເໝາະສົມກັບເວລາຂອງພວກເຮົາ. ພວກເຮົາໄດ້ຮັບປໂຍດຢ່າງຫຼວງຫຼາຍເມື່ອພວກເຮົາອ່ານ, ຄິດແລະຕຶກຕອງແລະຄິດເຖິງຄວາມຈິງໃນພຣະຄັມພີເປັນປະຈຳ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

**1. ເພງສັນລະເສີນ 1:1-3**

*1 ຄວາມສຸກເປັນຂອງຄົນ ຜູ້ທີ່ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວ ຜູ້ທີ່ບໍ່ປະພຶດຕາມແບບຢ່າງຂອງຄົນບາບ ຫລືບໍ່ຕິດພັນກັບພວກທີ່ປະໝາດພຣະເຈົ້າ. 2 ແຕ່ວ່າຄວາມສຸກເປັນຂອງຜູ້ທີ່ມັກອ່ານພຣະຄຳຂອງພຣະຜູ້ເປັນເຈົ້າແລະຮຽນຮູ້ເອົາທຸກມື້ທຸກຄືນ. 3 ຄົນຜູ້ນີ້ເປັນຄືຕົ້ນໄມ້ທີ່ປູກໃກ້ລຳນໍ້າ ຊຶ່ງມີໃບຂຽວສົດງົດງາມແລະເກີດໝາກຕາມລະດູ ລາວກະທຳທຸກສິ່ງກໍສຳເລັດຜົນ.*

ຄົນມັກເວົ້າຫຼາຍກ່ຽວກັບຄວາມສຸກ. ບໍ່ວ່າຈະຢູ່ໃນບ້ານເຮືອນ, ຢູ່ໃນເຂດວິທະຍາລັຍ, ຫຼືສະຖານທີ່ທຳງານ, ປົກກະຕິແລ້ວຄົນສ່ວນຫຼາຍຕ້ອງການທີ່ຈະມີຄວາມສຸກ. ບັນພະບຸລຸດຜູ້ກໍ່ຕັ້ງອາເມຣິກາຂອງພວກເຮົາກໍຂຽນການຖແລງການປະກາດເອກະລາດຂອງພວກເຮົາວ່າ "ການສແວງຫາຄວາມສຸກ" ແມ່ນນຶ່ງໃນ "ສິດທີທີ່ບໍ່ສາມາດຍົກເລີກໄດ້" ທີ່ພວກເຮົາໄດ້ຮັບໂດຍຜູ້ສ້າງຂອງພວກເຮົາ, ພ້ອມກັບ "ຊີວິດ" ແລະ "ເສລີພາບ." ພວກເຮົາອາດຄິດເຖິງຄວາມສຸກໃນການມີອິດສຣະໃນການເຮັດສິ່ງໃດກໍຕາມທີ່ພວກເຮົາຕ້ອງການແຕ່ພຣະຄຳຂອງພຣະເຈົ້າໄດ້ເຍີງໃຫ້ເຫັນຮູບພາບທີ່ແຕກຕ່າງກັນຫຼາຍທີ່ສຸດ.

ຄຳວ່າຄວາມສຸກໃນພຣະຄັມພີມັນຖືກມີສ່ວນປະສົມກັບຄຳວ່າເປັນພຣະພອນ, ແລະຫຼາຍຄົນມັກສິ່ງນັ້ນ, ການເຊື່ອວ່າຄວາມສຸກສາມາດເປັນໄປໄດ້ຫຼືຂັບເຄື່ອນໄປໂດຍສະຖານະການພາຍນອກເທົ່ານັ້ນ. ໃນຂນະທີ່ພວກເຮົາອາດຊຶມຊັບເອົາທັສນະຄວາມສຸກຂອງຝ່າຍໂລກ. ພຣະຄັມພີໄດ້ເຮັດໃຫ້ພວກເຮົາເຫັນຄວາມໝາຍທີ່ເລິກເຊິ່ງກວ່ານັ້ນອີກ. ຈາກທັສນະຂອງພຣະເຈົ້າ, ຄວາມສຸກສູງສຸດບໍ່ສາມາດພົບໄດ້ໂດຍການເຮັດໃຫ້ຄວາມໃຝ່ຝັນທັງໝົດຂອງທ່ານສົມປາຖນາ, ການແຕ່ງງານກັບຄົນທີ່ຖືກຕ້ອງເໝາະສົມ, ຫຼືການຕິດຕາມຄວາມໃຝ່ຝັນຂອງຕົນເອງ. ນັກຂຽນບົດເພງສັນລະເສີນກ່າວວ່າພວກເຮົາພົບຄວາມສຸກທີ່ແທ້ຈິງໂດຍການຊື່ນຊົມ "ໃນພຣະຄຳຂອງພຣະຜູ້ເປັນເຈົ້າ" (ຂໍ້. 2). ແທນທີ່ຈະເດີນໄປຕາມກະແສຄ່ານິຍົມຂອງໂລກ,

ໃນຂໍ້ 1, ຜູ້ຂຽນເພງສັນລະເສີນໄດ້ໃຫ້ຄຳເວົ້າສາມຄຳທີ່ແຕກຕ່າງກັນ-"ຄົນຊົ່ວ,""ຄົນບາບ," ແລະ "ຄົນເຍາະເຍີ້ຍ"-ເພື່ອອະທິບາຍອຸດົມການແລະພຶດຕິກັມຂອງໂລກ. ພວກເຮົາມັກຈະຖືກລໍ້ລວງໃຫ້ "ເດີນຕາມຄຳແນະນຳ" ຂອງໂລກ, ເນື່ອງຈາກອິດທິພົນຂອງໂລກເປັນການຊັກຈູງໃຈເຮົາ. ພວກເຮົາອາດສາມາດຊອກຫາຄວາມສຸກແບບງ່າຍໆນອກຈາກພຣະເຈົ້າ. ແຕ່ທ່ານບໍ່ສາມາດພົບຄວາມສຸກທີ່ແທ້ຈິງຢູ່ທີ່ນັ້ນ. ຄວາມສຸກທີ່ແທ້ຈິງ-ພຣະພອນຂອງພຣະເຈົ້າ!-ເກີດຂຶ້ນເມື່ອເຮົາຊື່ນຊົມໃນພຣະຄຳຂອງພຣະເຈົ້າແລະ "ຄຶດຕຶກຕອງຢູ່ທັງກາງວັນແລະກາງຄືນ" (ຂໍ້. 2).

*ເມື່ອໃດທີ່ຂໍ້ພຣະຄັມພີຕິດຢູ່ກັບທ່ານໃນລະດູການຂອງຊີວິດ?*

ມີຫຍັງເກີດຂຶ້ນໃນຄວາມຄິດຂອງທ່ານເມື່ອໄດ້ຍິນຄຳວ່າ "ນັ່ງສະມາທິ"? ບາງທີທ່ານອາດຈະນຶກເຖິງພາບວັດແຫ່ງນຶ່ງທີ່ມີພະສົງກຸ່ມນຶ່ງນັ່ງຫຼັບຕາຄຶດຕຶກຕອງກວດກາເບິ່ງຢ່າງເລິກເຊິ່ງ. ຫຼືບາງທີທ່ານອາດຄິດເຖິງບາງຄົນທີ່ຖືສາສນາຊາວຕາວັນອອກແລະພະຍາຍາມເຮັດໃຫ້ຈິດໃຈຂອງເຂົາເປົ່າຫວ່າງ. ການສະມາທິໃນພຣະຄັມພີແມ່ນແຕກຕ່າງກັນຢ່າງຫຼວງຫຼາຍກັບສາສນາຕາວັນອອກ. ແທນທີ່ຈະເຮັດໃຫ້ຄວາມຄິດໃນແງ່ລົບໝົດໄປ, ການສະມາທິໃນພຣະຄັມພີກັບພະຍາຍາມເຮັດໃຫ້ຈິດໃຈຂອງທ່ານເຕັມລົ້ນໄປດ້ວຍຄວາມຈິງຂອງພຣະເຈົ້າ. ແລະແທນທີ່ຈະເຮັດໃຫ້ທ່ານມີສ່ວນຮ່ວມກັບທັມມະຊາດຫຼືໂລກຈັກກະວານ, ການນັ່ງສະມາທິໃນພຣະຄັມພີເຮັດໃຫ້ທ່ານມີຄວາມສຳພັນກັບກັບພຣະເຈົ້າຢ່າງເລິກເຊິ່ງກວ່າໃນຂນະທີ່ທ່ານພິຈາລະນາພຣະຄຳຂອງພຣະອົງທີ່ຂຽນດ້ວຍຫົວໃຈທັງໝົດ.

ຄຳເວົ້າໃນພາສາເຮັບເຣີໃຊ້ສຳລັບສະມາທິແມ່ນຄວາມໝາຍຕົ້ນຕໍ, "ທີ່ຈະຍຶດຄອງກັບ." ອັນທີ່ສອງ, ມັນໝາຍຄວາມວ່າຄວາມຈົ່ມພຶມພຳກັບຕົນເອງ. ດັ່ງນັ້ນ, ແທນທີ່ຈະພຽງແຕ່ຄິດກັບຕົນເອງຢ່າງງຽບໆ, ການນັ່ງສະມາທິໃນພຣະຄັມພີຍັງກ່ຽວຂ້ອງກັບການເວົ້າກັບຕົວເອງດ້ວຍການອອກສຽງ. ເອົາສອງຄວາມໝາຍນີ້ຮວມເຂົ້າກັນ, ທ່ານຕ້ອງສືບຕໍ່ຮັກສາພຣະຄຳຂອງພຣະເຈົ້າເປັນອັນດັບນຶ່ງໃນຈິດໃຈຂອງທ່ານແລະເວົ້າຄວາມຈິງຂອງພຣະອົງຕໍ່ສະຖານະການຂອງທ່ານ.

ການນັ່ງສະມາທິໃນພຣະຄຳຂອງພຣະເຈົ້າແລະການທ່ອງຈຳພຣະຄັມພີບໍ່ສາມາດແຍກອອກຈາກກັນໄດ້. ເພື່ອໃຫ້ພຣະຄຳຂອງພຣະເຈົ້າມີຢູ່ໃນຮິມຝີປາກຂອງທ່ານ, ມັນຕ້ອງຂຽນໄວ້ໃນໃຈຂອງທ່ານ. ການທ່ອງຈຳພຣະຄັມພີແມ່ນການຝຶກຝົນກ່ຽວກັບການນຳໃຊ້ພຣະຄຳຂອງພຣະເຈົ້າສຳລັບຜູ້ເຊື່ອທີ່ເຕີບໃຫຍ່. ຜູ້ຕິດຕາມພຣະຄຣິດທີ່ສົມບູນນັ້ນຄວນອ່ານພຣະຄຳຂອງພຣະເຈົ້າເປັນປະຈຳ, ຟັງພຣະຄຳຂອງພຣະເຈົ້າ, ສຶກສາພຣະຄຳຂອງພຣະເຈົ້າ, ຄິດຕຶກຕອງໃນພຣະຄຳຂອງພຣະເຈົ້າແລະຈົດຈຳພຣະຄຳຂອງພຣະເຈົ້າ. ການທ່ອງຈຳພຣະຄັມພີຈະຊ່ວຍທ່ານຫຼວງຫຼາຍໃນການນັ່ງສະມາທິໃນພຣະຄັມພີ. ການຂຽນພຣະຄຳຂອງພຣະເຈົ້າໄວ້ໃນໃຈຂອງທ່ານກໍເພື່ອວ່າທ່ານຈະສາມາດນຳມາໃຊ້ໄດ້ໃນສະພາບການປະຈຳວັນຂອງທ່ານ, ເປັນຄວາມສງົບ, ຄວາມພໍໃຈ, ແລະຄວາມສຸກທີ່ບໍ່ສາມາດເຂົ້າໃຈໄດ້ບໍ່ວ່າທ່ານຈະປະເຊີນກັບບັນຫາໃດໆກໍ່ຕາມ.

## 2. ເພງສັນລະເສີນ 1:4-6

*4. ແຕ່ວ່າຄົນຊົ່ວບໍ່ເປັນຢ່າງນີ້ເລີຍລາວເປັນເໝືອນຂີ້ແກບທີ່ລົມພັດປິວໄປ. 5. ພຣະເຈົ້າຈະຕັດສິນລົງໂທດຄົນຊົ່ວຄົນບາບຈະຖືກກຳຈັດໜີຈາກຄົນຊອບທັມ. 6. ພຣະຜູ້ເປັນເຈົ້າຊົງພິທັກຮັກສາຄົນຊອບທັມແຕ່ວ່າຄົນຊົ່ວຈະຖືກປະປ່ອຍໃຫ້ດັບສູນໄປ.*

ຜູ້ຂຽນບົດເພງສັນລະເສີນໃຫ້ຄວາມແຕກຕ່າງກັນລະຫວ່າງ "ຄົນຊົ່ວ" ແລະ "ຄົນຊອບທັມ." ຜູ້ຂຽນໄດ້ສະແດງໃຫ້ເຫັນຄວາມແຕກ

ຕ່າງກ່ຽວກັບຄຳວ່າ "ການພິພາກສາ" ໃນຂໍ້ 5 ໝາຍເຖິງການພິພາກສາຄັ້ງສຸດທ້າຍຫຼືການຕັດສິນໃດໆໂດຍພຣະເຈົ້າ. ການສະຫຼຸບອັນໃດອັນນຶ່ງເໝາະສົມກັບຜູ້ຂຽນບົດເພງທີ່ເດີນຕາມພຣະຄຳຂອງພຣະອົງ, ແລະພຣະອົງຊົງພິພາກສາຜູ້ທີ່ບໍ່ເຮັດຕາມ. ອີກວິທີນຶ່ງ, ຜູ້ທີ່ຮູ້ຈັກແລະປະພຶດຕາມພຣະຄຳຂອງພຣະເຈົ້າຈະໄດ້ຮັບພຣະພອນໃນຂນະທີ່ຜູ້ທີ່ບໍ່ເຊື່ອໄດ້ປະເຊີນກັບຄວາມທຸກທໍລະມານ. ດັ່ງນັ້ນ, ມັນຈຶ່ງເຮັດໃຫ້ ພຣະຄຳຂອງພຣະເຈົ້າຖືກຝັງໄວ້ໃນຈິດໃຈຂອງພວກເຮົາໂດຍຜ່ານການສຶກສາ, ການສະມາທິ, ແລະການເຮັດຕາມຄວາມຈື່ຈຳ, ເພື່ອພວກເຮົາຈະດຳເນີນຊີວິດຕາມຄວາມຈິງໃນຊີວິດປະຈຳຂອງພວກເຮົາ. ຖ້າບໍ່ມີພຣະຄັມພີ, ພວກເຮົາຈະບໍ່ຮູ້ວ່າມັນໝາຍຄວາມວ່າແນວໃດທີ່ຈະດຳເນີນຊີວິດຢ່າງຊອບທັມ. ແຕ່ເມື່ອພວກເຮົາໄດ້ອ່ານ, ໄດ້ຍິນ, ແລະໄດ້ສຶກສາແລ້ວ, ພຣະຄັມພີໄດ້ສຳແດງໃຫ້ພວກເຮົາເຫັນວ່າຊີວິດອັນຊອບທັມນັ້ນແມ່ນຫຍັງ. ຈາກນັ້ນ, ໂດຍການນັ່ງສະມາທິແລະຈື່ຈຳ. ພຣະຄຳນັ້ນກໍຕິດໄປກັບຕົວພວກເຮົາເພື່ອຈະນຳໃຊ້ໃນເວລາເໝາະສົມ. ຈົ່ງພິຈາລະນາຕົວຢ່າງຕໍ່ໄປນີ້.

- ຖ້າຖືກລໍ້ລວງໃຫ້ຕົກເຂົ້າໄປໃນສະພາບການອັນໃດອັນນຶ່ງຂອງທ່ານ, ໃຫ້ທ່ອງຈຳຟີລິບປອຍ 2:14-15 "ຈົ່ງເຮັດທຸກສິ່ງໂດຍບໍ່ມີການຈົ່ມແລະຖົກຖຽງກັນ. ເພື່ອເຈົ້າທັງຫລາຍຈະບໍ່ຖືກຕິຕຽນແລະບໍ່ມີຄວາມຜິດ."
- ຖ້າທ່ານທໍ້ໃຈຫຼືບໍ່ສາມາດບັງຄັບຕົນເມື່ອມີອາລົມຄຸ້ນເຄືອງພີ່ນ້ອງໃນຄຣິສຕະຈັກ, ໃຫ້ທ່ານຈົດຈຳຖ້ອຍຄຳທີ່ພຣະເຢຊູໃຫ້ໄວ້ໃນ ໂຢຮັນ 13:34 ທີ່ວ່າ "ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ."
- ຖ້າທ່ານພະຍາຍາມທີ່ຈະຟັງຄວາມນາຍຈ້າງໃຫ້ທ່ານທ່ອງຈຳ ໂກໂລຊາຍ 3:22-23 ທີ່ວ່າ, "ຝ່າຍພວກຂ້ອຍຂ້າ, ຈົ່ງຟັງຄວາມຜູ້ທີ່ເປັນນາຍຝ່າຍມະນຸດໃນທຸກສິ່ງ ບໍ່ໃຊ້ເຮັດຖແລງໜ້າເໝືອນຢ່າງຄົນຜູ້ທີ່ມັກເຮັດແຕ່ໃຫ້ຊອບໃຈມະນຸດເທົ່ານັ້ນ. ແຕ່ຈົ່ງເຮັດດ້ວຍນໍ້າໃສໃຈຈິງ ດ້ວຍຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສິ່ງນຶ່ງສິ່ງໃດທີ່ພວກເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍເຕັມໃຈເໝືອນເຮັດຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເຮັດເພື່ອເຫັນແກ່ມະນຸດ."

ເມື່ອທ່ານເອົາພຣະຄຳຂອງພຣະເຈົ້າເຂົ້າຢູ່ໃນໃຈຂອງທ່ານ, ຄວາມຈິງຂອງພຣະອົງກໍພ້ອມທີ່ຈະໃຫ້ທ່ານນຳໃຊ້ໄດ້ໃນທຸກເວລາ. ບໍ່ວ່າຈະຢູ່ໃນບ່ອນໃດກໍຕາມ, ເພື່ອຊ່ວຍໃຫ້ມີການເຊື່ອຟັງ, ຄວາມຮັກ, ແລະການນະມັສການ. ພວກເຮົາບໍ່ໄດ້ນັ່ງສະມາທິຫຼືທ່ອງຈຳພຣະຄັມພີໂດຍບໍ່ມີຈຸດໝາຍ. ຈຸດປະສົງສຸດທ້າຍແມ່ນເພື່ອໃຫ້ທ່ານດຳເນີນຊີວິດທີ່ຊອບທັມເໝືອນພຣະເຢຊູ.

*ການຕັ້ງສະມາທິໃສ່ພຣະຄຳຂອງພຣະເຈົ້າຊ່ວຍພວກເຮົາແນວໃດ?*

## 3. ຟີລິບປອຍ 4:8

*8. ພີ່ນ້ອງທັງຫລາຍເອີຍ, ໃນທີ່ສຸດນີ້, ສິ່ງໃດທີ່ສັດຈິງ, ສິ່ງໃດທີ່ໜ້ານັບຖື, ສິ່ງໃດທີ່ຍຸດຕິທຳ, ສິ່ງໃດທີ່ບໍຣິສຸດ, ສິ່ງໃດທີ່ໜ້າຮັກ, ສິ່ງໃດທີ່ໜ້າຍິນດີ, ສິ່ງໃດທີ່ລໍ້າເລີດ ແລະຖ້າມີສິ່ງໃດທີ່ຄວນແກ່ການສັຣເສີນ ຈົ່ງພິຈາລະນາເຖິງສິ່ງເຫລົ່ານັ້ນ.*

ຂ້າພະເຈົ້າໄດ້ໃຫ້ໝາຍເຫດຕອນເລີ່ມຕົ້ນຂອງບົດຮຽນນີ້ແລ້ວວ່າ ຂໍ້ຄວາມຈຳນວນຫຼວງຫຼາຍພາຍມາກທີ່ປະທະກັບເຮົາໃນແຕ່ລະວັນ. ແທ້ຈິງແລ້ວ, ພວກເຮົາໄດ້ປະເຊີນໜ້າກັບຄຳເວົ້າຂອງຂໍ້ຄວາມຢ່າງຕໍ່ເນື່ອງທີ່ແຍ່ງຊີງກັນເຂົ້າໃຫ້ເຕັມຈິດໃຈຂອງເຮົາ. ສ່ວນຫຼາຍມັນອາດຈະບໍ່ມີຄວາມສຳຄັນພໍທີ່ຈະມີຄ່າຄວນກັບເວລາຂອງພວກເຮົາ. ຫຼາຍອັນໃນພວກມັນ, ກໍສາມາດທີ່ຈະສົ່ງຜົນກະທົບໃນທາງທີ່ບໍ່ດີຕໍ່ວິທີທີ່ເຮົາຄິດແລະສິ່ງທີ່ເຮົາອາສັຍຢູ່.

*ແມ່ນຫຍັງຄືຜົນທີ່ຕາມມາກັບການຄິດທີ່ບໍ່ດີ?*

ການຄຶດຕຶກຕອງໃນພຣະຄຳຂອງພຣະເຈົ້າບໍ່ພຽງແຕ່ຊ່ວຍໃຫ້ພວກເຮົາດຳເນີນຊີວິດທີ່ຖືກຕ້ອງເທົ່ານັ້ນ, ແຕ່ມັນຍັງເຮັດໃຫ້ພວກເຮົາຕັ້ງໃຈຢູ່ໃນຄວາມຄິດທີ່ຖືກຕ້ອງ. ນັ້ນຄືສິ່ງທີ່ທ່ານໂປໂລຕ້ອງການໃຫ້ຜູ້ເຊື່ອໃນເມືອງຟີລິບປອຍໃນສະຕະວັດທຳອິດຈື່ຈຳ. (ຟີລິບປອຍ 4:8) ເປັນຂໍ້ນຶ່ງທີ່ຍາວແລະມີຄວາມໝາຍເລິກເຊິ່ງ ຊຶ່ງໂປໂລໄດ້ສັ່ງໃຫ້ຜູ້ອ່ານຄິດຢ່າງຖືກຕ້ອງ. ທ່ານໂປໂລໄດ້ໃຫ້ຄຸນລັກສະນະຫຼາຍ

ຢ່າງທີ່ຄວນກໍານົດໃນສິ່ງທີ່ພວກເຮົາຄິດເຖິງ ພວກອັຄສາວົກກ່າວບອກໄວ້ວ່າພວກເຮົາຈະຢູ່ໝໝໝໝ "ໃນສິ່ງເຫຼົ່ານີ້." ເຮົາຄວນຕື່ມຄວາມຄິດຂອງພວກເຮົາໃຫ້ເຕັມໄປດ້ວຍສິ່ງທີ່ເປັນຄວາມຈິງ, ສິ່ງທີ່ໜ້ານັບຖື, ຍຸດຕິທັມ, ບໍຣິສຸດ, ໜ້າຮັກ, ເປັນໜ້າຍິນດີ, ແລະເປັນທີ່ລໍ້າເລີດ. ບາງຄົນອາດຈະໂຕ້ຖຽງວ່າຄຸນສົມບັດເຫຼົ່ານີ້ບໍ່ແມ່ນເອກະລັກສະເພາະຫຼືເປັນທີ່ແຕກຕ່າງຂອງຄຣິສະຕຽນ. ນັກປຣັຊຍາທາງດ້ານສິລທັມບາງຄົນຍັງສາມາດທີ່ຈະຕົບມືໃຫ້ກັບບັນຊີລາຍລະອຽດຕ່າງໆເຫຼົ່ານີ້, ແຕ່ໂປໂລໄດ້ສັນນະສູດເບິ່ງເຣື່ອງນີ້ຈາກທັສນະຂອງຜູ້ຕິດຕາມພຣະຄຣິດ. ພວກເຮົາສາມາດຮັກສາແລະອອກຄວາມຄິດເຫັນທີ່ຖືກຕ້ອງຕາມທີ່ພວກເຮົາກໍາລັງນໍາພາໂດຍພຣະວິນຍານບໍຣິສຸດແລະພຣະຄໍາຂອງພຣະເຈົ້າ. ພວກເຮົາໄດ້ຖືກປະທະກັບຂໍ້ຄວາມຫຼາຍຢ່າງທີ່ໂລກໄດ້ໂຍນມາໃສ່ພວກເຮົາ, ແຕ່ພວກເຮົາຕ້ອງສາມາດແຍກແຍະມັນອອກຜ່ານຈາກການກັ່ນຕອງໃນພຣະຄໍາຂອງພຣະເຈົ້າ. ເມື່ອເຮົາຄຶດຕຶກຕອງໃນພຣະຄໍາຂອງພຣະເຈົ້າ-ແລະເຖິງຈະຈົດຈໍາຂໍ້ພຣະຄໍາໄດ້-ຄວາມຄິດຂອງພວກເຮົາໃນຊ່ວງເວລາເຫຼົ່ານັ້ນຈະຢູ່ໃນສິ່ງທີ່ເປັນຄວາມຈິງ, ສິ່ງທີ່ໜ້ານັບຖື, ຍຸດຕິທັມ, ບໍຣິສຸດ, ໜ້າຮັກ, ເປັນໜ້າຍິນດີ, ແລະເປັນທີ່ລໍ້າເລີດ. ພວກເຮົາຄິດຄືກັນກັບພຣະຄຣິດ!

ການກັ່ນຕອງຂອງຈິດໃຈຂອງພວກເຮົາແມ່ນມີປະສິດຕິຜົນເທົ່າທີ່ພື້ນຖານຂໍ້ມູນພຣະຄັມພີທີ່ພວກເຮົາໄດ້ຮຽນຮູ້ມາ. ເພື່ອຈະຄິດຖືກຕ້ອງໃນທຸກດ້ານຂອງຊີວິດແລະຮັກພຣະເຈົ້າຢ່າງເລິກເຊິ່ງ, ພວກເຮົາຕ້ອງຕຶກຕອງໃນທຸກໆວັນແລະຈົດຈໍາພຣະຄໍາຂອງພຣະເຈົ້າຢ່າງສມໍ່າສເມີ. ຢ່າຕົກໃຈ, ແຕ່ໃຫ້ໝັ້ນທີ່ຈະນັ່ງສະມາທິໃນພຣະຄໍາຂອງພຣະເຈົ້າສໍາລັບເປົ້າໝາຍຂອງພຣະພອນຂອງພຣະເຈົ້າ, ການດໍາເນີນຊີວິດທີ່ຖືກຕ້ອງ, ແລະຄວາມຄິດທີ່ຖືກຕ້ອງ.

*ແມ່ນຫຍັງຄືຜົນປໂຍດຂອງການຢູ່ໃນຄວາມຈິງເຫຼົ່ານີ້ຂອງພຣະເຈົ້າ?*

## ນໍາໃຊ້ໃນຊີວິດ

ທ່ານຈະເຕີບໂຕຂຶ້ນໃນຂອບເຂດນີ້ແນວໃດທີ່ຈະເອົາໃຈໃສ່ກັບສິ່ງຂອງໆພຣະເຈົ້າ? ຈົ່ງເລືອກເອົາຂໍ້ນຶ່ງໃນການນໍາໃຊ້ຕໍ່ລົງໄປນີ້.

- **ເຮັດໃຫ້ມີຫ້ອງ.** ສ່ວນໃຫ່ຽຂອງພວກເຮົາແມ່ນໃຊ້ເວລາຢູ່ຕໍ່ໜ້າຈໍມືຖືຫຼາຍກ່ວາທີ່ພວກເຮົາຈະຍອມຮັບ. ພິຈາລະນາລຸດຜ່ອນເວລານັ້ນລົງສາມສິບນາທີຕໍ່ມື້ເພື່ອເຮັດໃຫ້ມີບ່ອນຫວ່າງໃນຕາຕະລາງເວລາຂອງທ່ານສໍາລັບການເຂົ້າເຝົ້າດ່ຽວກັບພຣະເຈົ້າໃນການອ່ານພຣະຄັມພີແລະອະທິຖານເວົ້າລົມກັບພຣະອົງ.
- **ສ້າງບັນຊີລາຍຊື່.** ໃນວາລະສານຫຼືອຸປະກອນໃດນຶ່ງ, ໃຫ້ລະບຸສິບຂໍ້ທີ່ມີຄວາມໝາຍທີ່ທ່ານຕ້ອງການໃຫ້ຢູ່ໃນຄວາມຊົງຈໍາ. ວາງແຜນເພື່ອຈະເລີ້ມຕົ້ນທ່ອງຈໍາພຣະຄັມພີ. ພິຈາລະນາໃນການນໍາສເນີອອກໃຊ້ຕໍ່ຜູ້ນໍາ, ຜູ້ດູແລຫຼືໝູ່ເພື່ອນທີ່ຈະຊ່ວຍທ່ານໃຫ້ເລີ້ມຕົ້ນຫຼືເພື່ອໃຫ້ທ່ານມີຄວາມຮັບຜິດຊອບ.
- **ຮັບເອົາການຝຶກອົບຮົມ.** ໃຊ້ເວລາເຄິ່ງມື້ຫຼືເຕັມມື້ເພື່ອຈະໄດ້ຢູ່ຄົນດຽວກັບພຣະເຈົ້າແລະພຣະຄັມພີຂອງທ່ານ. ຢ່າອ່ານພຣະຄັມພີແບບຟ້າວຟັ່ງ, ແຕ່ເມື່ອທ່ານອ່ານ, ຈົ່ງອະທິຖານກ່ຽວກັບຂໍ້ພຣະຄັມພີທີ່ທ່ານອ່ານ. ນັ່ງຕຶກຕອງເບິ່ງສິ່ງທີ່ພຣະຄັມພີເວົ້າ, ຄວາມໝາຍຂອງພຣະຄໍາ, ແລະຄໍາທີ່ຕອບສນອງຂອງພຣະຄໍາຕໍ່ຊີວິດທ່ານ.

ພຣະເຈົ້າປະສົງໃຫ້ທ່ານມີຄວາມສຸກທີ່ແທ້ຈິງໂດຍການສະມາທິໃນພຣະຄັມພີຂອງພຣະເຈົ້າ. ອັນນີ້ແມ່ນຕ້ອງການການກັ່ນຕອງທີ່ເຂັ້ມແຂງເພື່ອແຍກຂໍ້ຄວາມທີ່ທ່ານໄດ້ຮັບໃນແຕ່ລະວັນ. ຂໍໃຫ້ເຮັດດ້ວຍຄໍາໝັ້ນສັນຍາດ້ວຍຈິດໃຈທີ່ໃຫ້ກຽດພຣະເຈົ້າດ້ວຍຄວາມສັດຊື່ຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**